ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

1576

ເລກທີ:................./ກລປ

ນະຄອນຫຼວງວຽງຈັນ, ວັນທີ 01 JUL 2021

## ແຈ້ງການ

## ສືບຕໍ່ ຄວບຄຸມ ການລະບາດພະຍາດຜິວໜັງອັກເສບຕິດຕໍ່ ງົວຄວາຍ ຢູ່ ສປປ ລາວ

**ເຖິງ: ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ ແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ**

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບປັບປຸງເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມລ້ຽງສັດ ແລະ ການປະມົງ, ສະບັບເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017.
- ອີງໃສ່ ແຈ້ງການ ເລກທີ 1277/ກລປ, ລົງວັນທີ 31 ພຶດສະພາ 2021 ການຫ້າມນຳເຂົ້າຊົ່ວຄາວສັດໃຫຍ່ ປະເພດງົວ-ຄວາຍ ແລະ ຜະລິດຕະພັນຈາກສັດໃຫຍ່;
- ອີງໃສ່ ການຄົ້ນຄວ້າ ຂອງຄະນະວິຊາການຂອງກົມລ້ຽງສັດ ແລະ ການປະມົງ ຄັ້ງວັນທີ 30 ມິຖຸນາ 2021 ກ່ຽວກັບ ການສະຫຼຸບ ການຈັດຕັ້ງປະຕິບັດ ແຈ້ງການ ເລກທີ 1277/ກລປ, ລົງວັນທີ 31 ພຶດສະພາ 2021;

ກົມລ້ຽງສັດ ແລະ ການປະມົງ ຂໍຖືເປັນກຽດແຈ້ງມາຍັງຂະແໜງລ້ຽງສັດ ແລະ ການປະມົງ ໃນທົ່ວປະເທດຊາບວ່າ: ສະພາບການລະບາດຂອງພະຍາດຜິວໜັງອັກເສບຕິດຕໍ່ງົວຄວາຍ ແມ່ນຍັງສືບຕໍ່ ເປັນ ໄພຂົ່ມຂູ່ຕໍ່ການລ້ຽງສັດຢູ່ປະເທດເຮົາ, ຊຶ່ງຈາກການຕີລາຄາ ດ້ານລະບາດວິທະຍາ ພົບວ່າ ທົ່ວປະເທດມີອັດຕາການຕິດເຊື້ອສະເລ່ຍ 0,7 %, ມີອັດຕາການຕາຍສະເລ່ຍ 0,006 % ຫຼື ເທົ່າກັບ 1% ຂອງສັດຕິດເຊື້ອທັງໝົດ ແລະ ອັດຕາການປິ່ນປົວຫາຍດີມາຮອດປັດຈຸບັນຫຼາຍກວ່າ 80%.

ຢ່າງໃດກໍຕາມ, ເພື່ອເປັນການສືບຕໍ່ເຝົ້າລະວັງ ແລະ ຈຳກັດພະຍາດບໍ່ໃຫ້ມີການແຜ່ລະບາດກວ້າງອອກ ແລະ ແກ້ໄຂບັນຫາການຂາດແຄນ ຊີ້ນງົວ–ຄວາຍ ເພື່ອສະໜອງໃຫ້ແກ່ສັງຄົມ ນັ້ນ.

### ກົມລ້ຽງສັດ ແລະ ການປະມົງ ຈຶ່ງອອກແຈ້ງການເພີ່ມ ດັ່ງນີ້:

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ສືບຕໍ່ຕິດຕາມ, ເກັບກຳສະພາບການລະບາດຂອງພະຍາດຜິວໜັງອັບເສບຕິດຕໍ່ງົວ-ຄວາຍ ແລະ ລາຍງານ ກົມລ້ຽງສັດ ແລະ ການປະມົງ ຮັບຊາບ ເປັນແຕ່ລະອາທິດໃຫ້ເປັນປົກກະຕິ;
2. ອະນຸຍາດ ໃຫ້ ມີການ ເຄື່ອນຍ້າຍສັດປະເພດງົວຄວາຍ ຢູ່ພາຍໃນແຂວງ ໂດຍສະເພາະລະຫວ່າງບ້ານຕໍ່ບ້ານ ແລະ ເມືອງຕໍ່ເມືອງ ແລະ ແຂວງຕໍ່ແຂວງ ແຕ່ສັດທີ່ອະນຸຍາດໃຫ້ເຄື່ອນຍ້າຍນັ້ນ ຕ້ອງຜ່ານການກວດກາສຸຂະພາບຂອງເຈົ້າໜ້າທີ່ສັດຕະວະແພດທີ່ຖືກແຕ່ງຕັ້ງໂດຍອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດໂດຍຕ້ອງມີການຢັ້ງຢືນດັ່ງນີ້:
   - ໃບຢັ້ງຢືນການກວດກາສຸຂະພາບສັດ ຫຼື ໃບຢັ້ງຢືນການສັກຢາກັນພະຍາດຜິວໜັງອັກເສບຕິດຕໍ່ງົວ-ຄວາຍຢ່າງໜ້ອຍ 21 ວັນ;
   - ບໍ່ພົບອາການຕຸ່ມພອງຂອງພະຍາດຜິວໜັງອັກເສບຕິດຕໍ່ງົວຄວາຍ;
   - ບໍ່ພົບອາການໄຂ້ສູງເກີນກວ່າ 40 ອົງສາ ເຊ;
   - ໃນກໍລະນີສົງໄສ ໃຫ້ ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ລາຍງານໂດຍດ່ວນ ຕໍ່ ກົມ

ລ້ຽງສັດ ແລະ ການປະມົງ ພ້ອມທັງລົງສົມທົບ ກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ດຳເນີນການແຍກປ່ຽວ (ຄັດອອກຈາກຝູງ), ປິ່ນປົວຕາມອາການ ແລະ ເກັບຕົວຢ່າງ ສົ່ງໃຫ້ ສູນວິໄຈພະຍາດສັດແຫ່ງຊາດ ເພື່ອກວດກາ ວິໄຈ ຫາເຊື້ອພະຍາດ; ຖ້າກວດພົບເຊື້ອພະຍາດ ແມ່ນໃຫ້ປະຕິບັດຕາມມາດຕະການແຍກປ່ຽວ, ກັກກັນ ແລະ ປິ່ນປົວໂດຍທັນທີ;

3. ໃຫ້ສືບຕໍ່ຈັດຕັ້ງການໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ຊາວກະສິກອນ ແລະ ຜູ້ປະກອບການລ້ຽງໝູ ໃຫ້ເຂົ້າໃຈ ກ່ຽວກັບ ພະຍາດຜິວໜັງອັກເສບງົວຄວາຍທີ່ຮ້າຍແຮງດັ່ງກ່າວ ໃຫ້ຮູ້ ແລະ ປະຕິບັດໄດ້ ວິທີການປ້ອງກັນ, ການລາຍງານ ລວມທັງ ໃຫ້ເຮັດການອະນາໄມທຳຄວາມສະອາດຄອກ-ຟາມງົວຄວາຍ ເພື່ອບໍ່ໃຫ້ເກີດມີສັດ ຫຼື ແມງໄມ້ໃດໆ ທີ່ອາດເປັນພາຫະນຳເຊື້ອເຂົ້າ-ອອກຄອກ-ຟາມງົວຄວາຍ ຢ່າງເປັນປົກກະຕິ;
4. ໃຫ້ບັນດາດ່ານກວດກາສັດຕະວະແພດສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ສືບຕໍ່ ເອົາໃຈໃສ່ໃນການ**<u>ກວດກາຢ່າງເຂັ້ມງວດ</u>** ໂດຍໃຫ້ປະຕິບັດ ດັ່ງນີ້:
   - ສຳລັບການນຳເຂົ້າສັດໃຫຍ່ ໃຫ້ອະນຸຍາດສະເພາະ ສັດທີ່ໃຊ້ເປັນແນວພັນເທົ່ານັ້ນ ແລະ ໃຫ້ມີ ໃບຢັ້ງຢືນສຸຂະພາບສັດ ແລະ ການຢັ້ງຢືນແຫຼ່ງທີ່ມາຂອງສັດຈາກອົງການຂອງລັດຂອງປະເທດສົ່ງອອກ, ໃຫ້ມີໃບຢັ້ງຢືນການສັກຢາກັນພະຍາດຜິວໜັງອັກເສບຕິດຕໍ່ ຢ່າງໜ້ອຍ 21 ວັນ, ບໍ່ພົບອາການຕຸ່ມພອງຂອງພະຍາດຜິວໜັງອັກເສບຕິດຕໍ່ງົວຄວາຍ ແລະ ຕ້ອງບໍ່ພົບອາການໄຂ້ສູງເກີນກວ່າ 40 ອົງສາ ເຊ;
   - ສຳລັບສັດສົ່ງຜ່ານທຸກໂຕ ໃຫ້ມີ ໃບຢັ້ງຢືນສຸຂະພາບສັດ ແລະ ການຢັ້ງຢືນແຫຼ່ງທີ່ມາຂອງສັດຈາກອົງການຂອງລັດຂອງປະເທດສົ່ງອອກ, ໃຫ້ມີໃບຢັ້ງຢືນການສັກຢາກັນພະຍາດຜິວໜັງອັກເສບຕິດຕໍ່ ຢ່າງໜ້ອຍ 21 ວັນ, ບໍ່ພົບອາການຕຸ່ມພອງຂອງພະຍາດຜິວໜັງອັກເສບຕິດຕໍ່ງົວຄວາຍ ແລະ ຕ້ອງບໍ່ພົບອາການໄຂ້ສູງເກີນກວ່າ 40 ອົງສາ ເຊ;
   - ໃນກໍລະນີພົບສັດມີອາການ ແລະ ສົງໄສ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ ແລະ ສົ່ງຜ່ານໂດຍເດັດຂາດ;

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າກົມ**

ກະຊວງກະສິກຳແລະປ່າໄມ້ ກົມລ້ຽງສັດແລະການປະມົງ

ນ. ວິໄລພອນ ວໍລະພົມ

<u>ບ່ອນສົ່ງ:</u>

| | |
|---|---|
| – ຫົວໜ້າຫ້ອງການກະຊວງ | 01 ສະບັບ |
| – ຫົວໜ້າພະແນກ ກປ ແຂວງ,ນະຄອນຫຼວງ | 01 ສະບັບ |
| – ບັນດາພະແນກການທີ່ກ່ຽວຂ້ອງຂອງກົມ | 01 ສະບັບ |
| – ດ່ານກວດກາສັດຕະວະແພດ ບ່ອນລະ | 01 ສະບັບ |
| – ເກັບມ້ຽນ | 01 ສະບັບ |